**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ເລກທີ ໐໙ /ສປສສ

ນະຄອນຫຼວງວຽງຈັນ, ວັນທີ ໒໙ ກັນຍາ 2016

# ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

**ເຖິງ:** ບັນດາ ຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ທຸກຂັ້ນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປັບປຸງ ມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດ.

**ອີງຕາມ** ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

**ອີງຕາມ** ມະຕິຕົກລົງ ສະບັບເລກທີ 37/ ຄປຈ, ລົງວັນທີ 6 ພຶດສະພາ 2011 ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນສູງສຸດ;

**ອີງຕາມ** ມະຕິຕົກລົງຂອງກອງປະຊຸມສະພາຜູ້ພິພາກສາ ຄັ້ງວັນທີ 6 ກັນຍາ 2016.

ດັ່ງທີ່ຮູ້ແລ້ວວ່າ ໃນວັນທີ 17 ມັງກອນ 2013 ປະທານປະເທດໄດ້ອອກລັດຖະດຳລັດ ປະກາດໃຊ້ກົດໝາຍ ວ່າດ້ວຍການປັບປຸງ ມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດ ຢ່າງເປັນທາງການແລ້ວ, ແຕ່ສານບາງແຫ່ງຍັງນຳໃຊ້ມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75, 76 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເກົ່າເຂົ້າໃນການພິຈາລະນາຕັດສິນຄະດີຢູ່. ສະນັ້ນ ເພື່ອໃຫ້ມີຄວາມເປັນເອກະພາບກັນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ປະທານສານປະຊາຊົນສູງສຸດ ອອກຄຳແນະນຳ ດັ່ງນີ້:**

1. ຄະດີກ່ຽວກັບຢາເສບຕິດ ທີ່ເກີດຂຶ້ນນັບແຕ່ວັນທີ 17 ເມສາ 2013 ເປັນຕົ້ນມາ ແມ່ນໃຫ້ນຳໃຊ້ກົດໝາຍ ວ່າດ້ວຍການປັບປຸງ ມາດຕາ 146 ຂອງກົດໝາຍອາຍາ ແລະ ມາດຕາ 75, 76 ຂອງກົດໝາຍ ວ່າດ້ວຍຢາເສບຕິດ ສະບັບປັບປຸງ ປີ 2012 ເຂົ້າໃນການພິຈາລະນາຄະດີດັ່ງກ່າວ;

2. ໃນກໍລະນີທີ່ເຫັນວ່າ ຫົວໜ້າອົງການໄອຍະການປະຊາຊົນ ສັ່ງຟ້ອງຄະດີກ່ຽວກັບຢາເສບຕິດ ທີ່ບໍ່ສອດຄ່ອງກັບຄຳແນະນຳສະບັບນີ້ ໃຫ້ປະສານສົມທົບກັບອົງການໄອຍະການຄືນໃໝ່ ເພື່ອໃຫ້ການສັ່ງຟ້ອງຖືກຕ້ອງຕາມກົດໝາຍ.

ເມື່ອໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ໃຫ້ພະນັກງານທີ່ກ່ຽວຂ້ອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອພ້ອມກັນຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສານປະຊາຊົນສູງສຸດ

ຄຳພັນ ສິດທິດຳພາ

ບ່ອນສົ່ງ:

- ຄະນະປະຈຳສະພາແຫ່ງຊາດ 1 ສະບັບ (ເພື່ອລາຍງານ)
- ຫົວໜ້າອົງການໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ);
- ກະຊວງຍຸຕິທຳ 1 ສະບັບ(ເພື່ອຊາບ);
- ບັນດາສານປະຊາຊົນທ້ອງຖິ່ນ ບ່ອນລະ 1 ສະບັບ (ເພື່ອຊາບ ແລະ ປະຕິບັດ);
- ຄະນະສານ, ບັນດາກົມ, ຫ້ອງການ ແລະ ສະຖາບັນຄົ້ນຄວ້າ-ຝຶກອົບຮົມ ບ່ອນລະ 1 ສະບັບ (ເພື່ອປະຕິບັດ);
- ສຳເນົາໄວ້ 2 ສະບັບ.